**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

## "ຜ-ຟຟລ ຮັບລາງວັນ The Asset Triple A Awards 2016"

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ໄດ້ຮັບລາງວັນ The Asset Triple A Awards ປະຈໍາປີ 2016 ຫຼື The Asset Asian Awards 2016, ໃນສາຂາ Best Deal – Southeast Asia "Best Bond" ຫຼື ການລະດົມທຶນດ້ວຍການຂາຍ ພັນທະບັດດີເດັ່ນ, ເຊິ່ງມີພິທີມອບຮັບຈັດຂຶ້ນໃນວັນທີ 11/01/2017 ທີ່ຮົງກົງ ຈັດໂດຍ The Asset ເຊິ່ງເປັນວາລະສານດ້ານຕະຫຼາດທຶນທີ່ນໍາໜ້າ ແລະ ມີຊື່ສຽງໃນອາຊີ. ລາງວັນດັ່ງກ່າວເປັນລາງວັນລະດັບພາກພື້ນອາຊີ ທີ່ໄດ້ມອບໃຫ້ ຜ-ຟຟລ ເພື່ອຮັບຮູ້ເຖິງຜົນສໍາເລັດອັນພົ້ນເດັ່ນຂອງການລະດົມທຶນຜ່ານການອອກຮຸ້ນກູ້ຂອງ ຜ-ຟຟລ ໃນຕະຫຼາດພັນທະບັດ ຫຼື ຮຸ້ນກູ້ຂອງປະເທດໄທ ໃນເດືອນ ກັນຍາ ປີ 2016 ເຊິ່ງການລະດົມທຶນດັ່ງກ່າວ ແມ່ນຍຸດທະສາດການເຂົ້າເຖິງແຫຼ່ງທຶນຂອງບໍລິສັດ ເຊິ່ງສະແດງອອກຜ່ານການນໍາໃຊ້ຜົນການຈັດລໍາດັບຄວາມໜ້າເຊື່ອຖືຂອງບໍລິສັດ ຫຼື credit rating ເພື່ອເຂົ້າເຖິງແຫຼ່ງທຶນໃນຕະຫຼາດທຶນຂອງອາຊຽນ ໂດຍບໍ່ມີການຄໍ້າປະກັນຈາກລັດຖະບານ ແລະ ໃນຄັ້ງນີ້ສາມາດລະດົມທຶນໄດ້ທັງໝົດ 312 ລ້ານໂດລາ, ດ້ວຍເຫດຜົນນີ້ຈຶ່ງເຮັດໃຫ້ ຜ-ຟຟລ ໄດ້ຮັບລາງວັນທີ່ສໍາຄັນໃນຄັ້ງນີ້.

ສໍາລັບລາງວັນ The Asset Triple A Awards ຈັດຂຶ້ນທຸກໆປີ ປີນີ້ເປັນປີທີ 18 ແລ້ວ ເຊິ່ງລາງວັນດັ່ງກ່າວນີ້ແມ່ນໄດ້ມອບໃຫ້ກັບພາກສ່ວນທີ່ມີຜົນງານດີເດັ່ນ ແລະ ໜ້າເຊື່ອຖືໃນການດໍາເນີນທຸລະກິດໃນຂະແໜງການຕ່າງໆ ບໍ່ວ່າຈະເປັນຂະແໜງການທະນາຄານ, ການບໍລິຫານດ້ານການເງິນ ແລະ ຕະຫຼາດທຶນ ເຊິ່ງໃນຖານະທີ່ເປັນສື່ພິມທາງດ້ານການເງິນ ໃນອາຊີ ທີ່ເຂົ້າເຖິງບັນດານັກລົງທຶນ, ກຸ່ມຜູ້ດໍາເນີນທຸລະກິດໃນຂົງເຂດພາກພື້ນອາຊີ ແລະ ບັນດານັກລົງທຶນໃນທົ່ວໂລກ ດັ່ງນັ້ນຈຶ່ງເລັງເຫັນຄວາມສໍາຄັນຂອງທຸກພາກສ່ວນ ທີ່ຄວນໄດ້ຮັບການຍ້ອງຍໍ ແລະ ຊົມເຊີຍຜົນສໍາເລັດຂອງບັນດາຂະແໜງການຕ່າງໆທີ່ພົ້ນເດັ່ນໃນທຸກໆປີ. ສາມາດອ່ານລາຍລະອຽດໄດ້ທີ່: http://www.theasset.com/awards/country-awards-2016-deals-south-east-asia

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ຕູ້ ປ.ນ. 2392, ນະຄອນຫຼວງວຽງຈັນ ໂທລະສັບ (856-21) 316142
ແຟກ (856-21) 316141; ອີເມລ: edlgenhq@edlgen.com.la; ເວັບໄຊທ: www.edlgen.com.la